# ຄວາມຮັກ ທີ່ບໍ່ມີເງື່ອນໄຂ




“ເຮີ່ຍ! ສະບາຍດີ ຈິນດາ. ເຈົ້າພໍມີເວລາຟັງເລື່ອງ ທີ່ມີຄວາມໝາຍດີໆບໍ? ”
“ມີລະບໍ ເລົ່າມາເບິ່ງດຸ! ”
ຕອນສວາຍມື້ໜຶ່ງ ຫຼັງຈາກເລີກໂຮງຮຽນ ສີພອນ ກຳລັງຍ່າງ
ກັບບ້ານ. ລາວເຫັນກຸ່ມຜູ້ຊາຍນ້ອຍ ກຳລັງຫຼິ້ນດີກແປ໋ກ.
ລາວຢາກຫຼິ້ນກັບພວກເຂົາ ແຕ່ວ່າ...
“ເຮີ່ຍ! ມຶງເບິ່ງຫຍັງ? ມຶງຢາກຫຼິ້ນນຳພວກກູຫວ໋ະ ບັກຂີ້ທຸກ ບັກໂງ່ເອີ້ຍ!”


ສີພອນ ຮູ້ສຶກເຈັບໃຈຫຼາຍ
"ຢ່າດູຖູກກູ!!"
ທັນໃດນັ້ນ ເດັກຊາຍຄົນນັ້ນໄດ້ຫົວເຍາະເຍີ້ຍ ສີພອນ ແລ້ວກໍຈັບຄໍເສື້ອຂອງ ສີພອນ.
"ໂອ໋ ແມ່ນຫຍັງ? ມຶງຊິຕີກູຫວ໋ະ? ໂອຍ! ຢ້ານແທ້! ຢ້ານແທ້! ບັກນ້ອຍເອີຍ!"
ບໍ່ດົນກໍມີສຽງເດັກຊາຍໃນກຸ່ມດັງຂຶ້ນ...
"ຕີມັນເລີຍ! ຊົກໜ້າມັນໂລດ"
ມີໝູ່ທີ່ຮຽນຫ້ອງດຽວກັນກັບ ສີພອນ ເຫັນລາວຈຶ່ງຮູ້ສຶກກັງວົນໃຈຫຼາຍ...
"ຂ້ອຍຕ້ອງໄປ ບອກແມ່ ສີພອນ ດຽວນີ້!"
ສີພອນ ອົດທີ່ຊາຍຄົນນັ້ນ ດູຖູກຕົນເອງບໍ່ໄດ້ ລາວຈຶ່ງໃຊ້ກຳປັ້ນຊົກໜ້າຂອງຊາຍຄົນນັ້ນ.
ຕຸ໋ບ!!!


ໃນຂະນະທີ່ທັງສອງຄົນກຳລັງຕີກັນນັ້ນ ກໍມີສຽງດັງສອດຂຶ້ນ
“ຢຸດຕີກັນດຽວນີ້!”
ແມ່ ສີພອນ ບຸຝູງຊົນເຂົ້າມາ ແລະພະຍາຍາມ ແຍກທັງສອງອອກຈາກກັນ
“ເກີດຫຍັງຂຶ້ນ? ເປັນຫຍັງພວກລູກຈຶ່ງຕີກັນ?”
“ລາວຊົກໜ້າລູກ! ເລືອດດັງລູກຈົນແຕກນິນະແມ່!”


“ຈິນດາ ເຈົ້າຄິດແນວໃດ? ເຈົ້າຄິດວ່າ ແມ່ຂອງລາວ ຈະເຮັດຫຍັງໃສ່ລາວບໍ?”


ແມ່ຂອງ ສີພອນ ໄດ້ກອດ ສີພອນ ຈົນເຮັດໃຫ້ທຸກຄົນຕົກໃຈ ໃນຄວາມຮັກທີ່ລາວມີຕໍ່ລູກຂອງລາວ.


“ແມ່ຮັກລູກຂອງແມ່ຫຼາຍ
ແລະແມ່ຕ້ອງຂໍໂທດ
ທີ່ລູກຊາຍຂອງແມ່ ໄດ້ຕີເຈົ້າ”
“ສີພອນ ແມ່ຮັກລູກຫຼາຍ
ແລະແມ່ຍົກໂທດໃຫ້ກັບລູກ
ແຕ່ໂອກາດໜ້າ ຢ່າຕີກັນອີກເດີ!”
“ໄປ໋! ກັບເຮືອນເຮົາ
ແມ່ໄດ້ກຽມອາຫານແຊບໆໄວ້ໃຫ້ລູກ”


“ຍ້ອນຫຍັງ ແມ່ຂອງລາວຈຶ່ງຮັກລາວ
ເຖິງແມ່ນວ່າລາວເຮັດຜິດ?”
“ມັນເປັນຄວາມຮັກທີ່ແທ້ຈິງ ທີ່ແມ່ຂອງລາວມີຄວາມ
ຮັກໃຫ້ກັບລາວ ຄືກັບຄວາມຮັກຂອງ ພຣະເຈົ້າ ທີ່ມີ
ໃຫ້ກັບເຮົາ ເຖິງແມ່ນວ່າພວກເຮົາຈະເປັນ
ຄົນດີ ຫຼື ຄົນບໍ່ດີ, ຄົນຮັ່ງມີ ຫຼື ຄົນຍາກຈົນ,
ຄົນໂງ່ ຫຼື ຄົນສະຫຼາດ ແຕ່ ພຣະເຈົ້າ ກໍຍັງຮັກພວກເຮົາ
ເພາະວ່າພວກເຮົາເປັນຂອງ ພຣະເຈົ້າ.”


“ຄືກັບເງິນ 10 ໂດລາ
ເຈົ້າຕ້ອງການມັນແມ່ນບໍ?
ຖ້າຂ້ອຍຢຽບມັນເຈົ້າຍັງຈະເອົາບໍ?”
“ເອົາລະເນາະ!”
“ຖ້າຫາກຂ້ອຍຍ່ອງມັນ ແລະຢຽບມັນ
ເຈົ້າຍັງຈະເອົາອີກບໍ?”
“ເອົາແທ້!
ຂ້ອຍຍັງຢາກໄດ້ມັນຢູ່”


“ຖ້າຫາກຂ້ອຍຖົ່ມນ້ຳລາຍໃສ່ມັນ ເຈົ້າກໍຍັງຈະເອົາມັນບໍ?”
“ເອົາແທ້! ເພາະມັນຍັງມີຄຸນຄ່າຢູ່”


“ທຸກຄົນຍ່ອມມີຄ່າສຳລັບ ພຣະເຈົ້າ ເຖິງແມ່ນວ່າເຮົາຈະເປັນຄົນບໍ່ດີ ຫຼື ຄົນດີ, ຄົນເຕ້ຍ ຫຼື ຄົນສູງ, ຄົນຍາກຈົນ ຫຼື ຄົນຮັ່ງມີ, ຄົນສະຫຼາດ ຫຼື ບໍ່ສະຫຼາດ ພຣະເຈົ້າ ຊົງຮັກເຮົາ ແລະເຮົານີ້ແຫຼະ ເປັນຜູ້ທີ່ສຳຄັນສຳລັບ ພຣະເຈົ້າ.”
M. CH. SOKHA

## ຄຳຖາມສົນທະນາ

ຖ້າມີຄົນດູຖູກເຈົ້າ ເຈົ້າຮູ້ສຶກແນວໃດ?

ເມື່ອຄົນອື່ນກຳລັງດູຖູກເຈົ້າ ເຈົ້າຄິດວ່າ
ພຣະເຈົ້າຈະມີຄວາມຮູ້ສຶກແນວໃດ?

ເມື່ອເຈົ້າເຮັດຜິດ ເຈົ້າຄິດວ່າ ພຣະເຈົ້າຈະຢຸດຮັກເຈົ້າ
ຫຼື ເຈົ້າຄິດວ່າ ພຣະເຈົ້າຈະບໍ່ຢຸດຮັກເຈົ້າ? ຍ້ອນຫຍັງ?



## ກິດຈະກຳ

ໃຫ້ຊອກກິດຈະກຳໜຶ່ງ ເພື່ອສະແດງຄວາມຮັກ
ຂອງເຈົ້າຕໍ່ກັບໃຜຄົນໜຶ່ງ ທີ່ເຈົ້າພົບວ່າ ມັນຍາກທີ່
ຈະສະແດງຄວາມຮັກຕໍ່ລາວ.

ຄິດຫາວິທີສະແດງຄວາມຮັກ ຕໍ່ກັບລາວ
ໂດຍທີ່ບໍ່ຕ້ອງໃຊ້ຈ່າຍເງິນ.

## ລູກເນລະຄຸນ

ແລ້ວ ພຣະເຢຊູ ກໍກ່າວຕໍ່ໄປວ່າ, “ຄັ້ງໜຶ່ງມີຜູ້ຊາຍຄົນໜຶ່ງ ທີ່ມີລູກຊາຍຢູ່ສອງຄົນ. ຜູ້ນ້ອງ ເວົ້າກັບພໍ່ວ່າ, “ພໍ່ເອີຍ ຈົ່ງເອົາຊັບສິນ ສ່ວນທີ່ຈະຕົກເປັນຂອງລູກນັ້ນໃຫ້ລູກດຽວນີ້ສາ.”

ດັ່ງນັ້ນ ພໍ່ຈຶ່ງໄດ້ແບ່ງຊັບສິນໃຫ້ລູກຊາຍທັງສອງຂອງຕົນ. ຕໍ່ມາບໍ່ພໍເທົ່າໃດມື້ຜູ້ເປັນນອງກໍໄດ້ຂາຍຊັບສິນສ່ວນທີ່ຕົກເປັນຂອງຕົນນັ້ນ ແລະຈາກບ້ານໄປພ້ອມດ້ວຍເງິນ. ລາວໜີ ໄປຍັງແດນໄກແລະຜານຊັບຂອງຕົນຢູ່ທີ່ນັ້ນໃນການຢູ່ກິນຢ່າງຂາດລະບຽບ. ລາວໄດ້ ຈັບຈ່າຍຊັບໝົດກ້ຽງ.

ຕໍ່ມາກໍເກີດການອຶດຢາກອັນຮ້າຍແຮງທົ່ວປະເທດ ແລະລາວບໍ່ມີຫຍັງເຫຼືອຢູ່ເລີຍ. ດັ່ງນັ້ນ ລາວຈຶ່ງໄປຂໍຮັບຈ້າງນຳຄົນໜຶ່ງໃນເມືອງນັ້ນ ແລະຄົນນີ້ກໍໃຊ້ລາວອອກໄປລ້ຽງໝູ ທີ່ທົ່ງນາ. ລາວຄິດຢາກກິນຝັກຖົ່ວທີ່ໝູກິນໃຫ້ອີ່ມທ້ອງ ແຕ່ບໍ່ມີໃຜເອົາໃຫ້ລາວກິນ.

ໃນທີ່ສຸດ ລາວກໍສຳນຶກຕົວໄດ້ ແລະເວົ້າກັບຕົນເອງວ່າ, “ລູກຈ້າງທຸກຄົນຂອງພໍ່ຂ້ອຍກໍຍັງມີອາຫານກິນຈົນເຫຼືອເຟືອ ສ່ວນຂ້ອຍພວມຕາຍຫິວຢູ່ທີ່ນີ້!” ຂ້ອຍຈະລຸກຂຶ້ນເມືອຫາພໍ່ຂອງຂ້ອຍ ແລະເວົ້າວ່າ, “ພໍ່ເອີຍ ລູກໄດ້ເຮັດບາບຕໍ່ ພຣະເຈົ້າ ແລະຕໍ່ພໍ່ແລ້ວ. ລູກບໍ່ສົມຄວນທີ່ມີຊື່ວ່າເປັນລູກຂອງພໍ່ອີກຕໍ່ໄປຈົ່ງເຮັດກັບລູກຄືລູກຈ້າງຄົນໜຶ່ງຂອງພໍ່.” ດັ່ງນັ້ນລາວຈຶ່ງລຸກຂຶ້ນຄືນເມືອຫາພໍ່ຂອງຕົນ.

ຂະນະທີ່ຍັງຢູ່ຫ່າງໄກຈາກບ້ານພໍສົມຄວນ ພໍ່ກໍແນມເຫັນລາວ ແລະສົງສານຈຶ່ງແລ່ນອອກໄປກອດລູກໄວ້ດ້ວຍຄວາມຮັກແພງ. ຜູ້ເປັນລູກຈຶ່ງເວົ້າວ່າ, “ພໍ່ເອີຍ ລູກໄດ້ເຮັດບາບຕໍ່ ພຣະເຈົ້າ ແລະຕໍ່ພໍ່ແລ້ວລູກບໍ່ສົມຄວນທີ່ມີຊື່ວ່າເປັນລູກຂອງພໍ່ອີກຕໍ່ໄປ.”

ແຕ່ຜູ້ເປັນພໍ່ ເອີ້ນບັນດາຄົນໃຊ້ຂອງຕົນມາ. ເພິ່ນເວົ້າວ່າ, “ໄວໆ ຮີບເອົາເຄື່ອງຢ່າງດີທີ່ສຸດມາໃຫ້ລູກຂອງເຮົານຸ່ງ. ຈົ່ງເອົາແຫວນມາສວມໃສ່ນິ້ວມືແລະສຸບເກີບໃສ່ຕີນໃຫ້ລູກຂອງເຮົາ. ແລ້ວຈົ່ງໄປເອົາງົວໜຸ່ມໂຕຕຸ້ຍພີດີງາມມາຂ້າ ແລະຈັດງານກິນລ້ຽງຂຶ້ນຮ່ວມກັນສະຫຼອງ! ດ້ວຍວ່າລູກເຮົາຄົນນີ້ຕາຍແລ້ວແຕ່ບັດນີ້ລາວມີຊີວິດຢູ່, ລາວເສຍໄປແລ້ວແຕ່ບັດນີ້ເຮົາໄດ້ພົບລາວອີກ.”

ສະນັ້ນແຫຼະ ງານກິນລ້ຽງຈຶ່ງເລີ່ມຂຶ້ນ.

ລູກາ 15:11-24





© Alongsiders International
www.alongsiders.org
Email: info@alongsiders.org